ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

===== 000 =====

ກະຊວງສຶກສາທິການ ແລະ ກິລາ
ກົມການສຶກສາຊັ້ນສູງ
ສະຖາບັນພາສາຕ່າງປະເທດໂລໂກສ
ໂທ: 021 418120, ແຟັກ: 021 720209

ເລກທີ 0 6 7 /ສພລ
ວັນທີ: 2 7 JAN 2026

# ກົດລະບຽບຂອງນັກສຶກສາ

# ຫຼັກສູດອະນຸປະລິນຍາ, ປະລິນຍາຕີ ແລະ ປະລິນຍາຕີຕໍ່ເນື່ອງ (ສະບັບປັບປຸງປີ 2026)

**ມາດຕາ 1: ການເຂົ້າເປັນນັກສຶກສາຂອງສະຖາບັນ (Enrolment):**

ນັກສຶກສາສະຖາບັນພາສາຕ່າງປະເທດໂລໂກສ (ຫຼື ເອີ້ນຫຍໍ້ວ່ານັກສຶກສາ ສພລ) ແມ່ນຜູ້ທີ່ໄດ້ລົງທະບຽນເປັນນັກສຶກສາຢ່າງຖືກຕ້ອງຕາມລະບຽບຫຼັກການທີ່ ສະຖາບັນພາສາຕ່າງປະເທດໂລໂກສ ໄດ້ກຳນົດໄວ້.

➢ ເງື່ອນໄຂຂອງຜູ້ທີ່ຈະເປັນນັກສຶກສາ ສພລ ມີດັ່ງນີ້: ( **Institute Admission Qualification**)

1) ຕ້ອງສຳເລັດການສຶກສາຊັ້ນມັດທະຍົມຕອນປາຍ ຫຼື ທຽບເທົ່າ, ມີລະດັບການສຶກສາຊັ້ນສູງ ຫຼື ລະດັບປະລິນຍາຕີໃນສາຂາອື່ນ (High School Graduate or equivalent, Higher Diploma or another BA program);

2) ຕ້ອງຜ່ານການສອບເສັງຄັດເລືອກຕາມເກນລະດັບຄະແນນ ຂອງ ສພລ ທີ່ໄດ້ກຳນົດໄວ້, ໃນກໍລະນີ ມີນັກສຶກສາທີ່ຕ້ອງການທຽບໂອນໜ່ວຍກິດຈາກສະຖານການສຶກສາອື່ນມາຮຽນຕໍ່ທີ່ ສພລ ໃນສາຂາວິຊາທີ່ຄ້າຍຄືກັນ ຈະຕ້ອງໄດ້ປະກອບເອກະສານຕ່າງໆ ທີ່ກ່ຽວຂ້ອງຂໍເພື່ອອະນຸມັດທຽບໂອນໜ່ວຍກິດຕາມຂໍ້ກຳນົດ ແລະ ລະບຽບການ;

3) ຕ້ອງມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ ແລະ ມີຮ່າງກາຍທີ່ບໍ່ເປັນອຸປະສັກໃນການຮຽນທີ່ກ່ຽວຂ້ອງກັບສາຂາວິຊາຮຽນ;

4) ມີຄຸນສົມບັດດີ, ບໍ່ມີປະຫວັດເຄື່ອນໄຫວທີ່ບໍ່ດີ (ບໍ່ເຄີຍມີຄະດີຕິດຕົວ) ໃນເວລາຮຽນ ຫຼື ເວລາປະຕິບັດງານໃນກົມກອງທ້ອງຖິ່ນກ່ອນມາຮຽນ (Good attitude and never had a bad history before).

**ມາດຕາ 2: ໜ້າທີ່ຂອງນັກສຶກສາ (Students' Duties)**

1) ຄົ້ນຄວ້າ-ຮໍ່າຮຽນໃຫ້ສຳເລັດການສຶກສາຕາມຫຼັກສູດທີ່ໄດ້ກຳນົດໄວ້;

2) ຕັ້ງໜ້າຝຶກຝົນຕົນເອງໃຫ້ມີຄຸນສົມບັດ ສິນທຳປະຕິວັດ ກຽມພ້ອມປະຕິບັດໜ້າທີ່ພົນລະເມືອງດີຂອງຊາດໃນອະນາຄົດ;

3) ຕັ້ງໜ້າປະຕິບັດຂໍ້ກຳນົດ, ກົດລະບຽບ, ປະກາດແຈ້ງການ ແລະ ມະຕິຄຳສັ່ງຕ່າງໆທີ່ການຈັດຕັ້ງທຸກຂັ້ນຂອງ ສພລ ວາງອອກ;

4) ເປັນເຈົ້າການເຂົ້າຮ່ວມກິດຈະກຳນອກຫຼັກສູດຕ່າງໆ ທີ່ ສພລ ໄດ້ຈັດຂຶ້ນ ໃນແຕ່ລະສົກຮຽນ (ສຳລັບນັກສຶກສາທີ່ເຂົ້າຮ່ວມກິດຈະກຳນອກຫຼັກສູດໃດໜຶ່ງຂອງ ສພລ ຄົບຕາມຈຳນວນໜ່ວຍກິດທີ່ໄດ້ກຳນົດໄວ້ (Extracurricular Activities) ຈະໄດ້ຮັບໃບຢັ້ງຢືນ ຈາກພະແນກກິດຈະການນັກສຶກສາ ສພລ, ໃບຢັ້ງຢືນດັ່ງກ່າວສາມາດນຳມາສະເໜີຂໍຄະແນນພິເສດເພື່ອທົດແທນລາຍວິຊາທີ່ມີຄະແນນອ່ອນ ຫຼື ຕົກໄດ້ ເຊິ່ງຈະອີງຕາມການພິຈາລະນາ ແລະ ການຕົກລົງເຫັນດີຂອງໜ່ວຍງານຮັບຜິດຊອບ.



Scanned with CamScanner

**ມາດຕາ 3: ສິດ ແລະ ໜ້າທີ່ຂອງຄະນະຫ້ອງ (Responsibilities of Class president):**

**1) ສິດຂອງຄະນະຫ້ອງ:**

- ຄະນະຫ້ອງເປັນເປັນຜູ້ຊ່ວຍ ແລະ ເປັນທີ່ປຶກສາຂອງ ຄູ-ອາຈານ (ຄູປະຈຳຫ້ອງ ແລະ ຄູປະຈຳວິຊາ) ເພື່ອລົງເລິກດ້ານແນວຄິດການເມືອງ, ຕັກເຕືອນ, ສົ່ງເສີມ ແລະ ຊຸກຍູ້ການຮຽນ, ຕິດຕາມການປະຕິບັດລະບຽບວິໄນ, ນຳພາສະມາຊິກຂອງຕົນສຳຫຼວດກວດກາຫ້ອງຮຽນຢ່າງເປັນປະຈຳ.

**2) ໜ້າທີ່ຂອງຄະນະຫ້ອງ:**

- ຄະນະຫ້ອງຢູ່ພາຍໃຕ້ການຊີ້ນຳຂອງຄູ-ອາຈານ (ຄູປະຈຳຫ້ອງ ແລະ ຄູປະຈຳວິຊາ), ຊ່ວຍຄູໃນການຕິດຕາມສຶກສາອົບຮົມ ແລະ ເຜີຍແຜ່ບັນດາ ນິຕິກຳ, ນະໂຍບາຍ ແລະ ບັນດາປະກາດແຈ້ງການຂອງ ສພລ ໃຫ້ແກ່ສະມາຊິກພາຍໃນຫ້ອງ, ປະຕິບັດຈັດຕັ້ງເຄື່ອນໄຫວກິດຈະກຳ, ວຽກງານສັງຄົມ ແລະ ອື່ນໆ;

- ນຳພາສະມາຊິກພາຍໃນຫ້ອງປົກປັກຮັກສາວັດຖຸສິ່ງຂອງສ່ວນລວມໃຫ້ຢູ່ໃນສະພາບປົກກະຕິ, ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ, ມີໜ້າທີ່ລວມສະມາຊິກໃນຫ້ອງຢ່າງໜ້ອຍເດືອນລະຄັ້ງ ແລະ ລາຍງານທຸກສະພາບການ ໃຫ້ຄູປະຈຳຫ້ອງ ແລະ ພາກວິຊາທີ່ຕົນສັງກັດໄດ້ຮັບຊາບເປັນປົກກະຕິ;

- ເກັບກຳສະຖິຕິສະມາຊິກໃນຫ້ອງຮຽນ, ລາຍງານນັກສຶກສາຜູ້ທີ່ຂາດຮຽນໃຫ້ແກ່ຄູປະຈຳວິຊາ, ບັນທຶກການເກັບເງິນຄັງ ແລະ ບໍລິຫານນຳໃຊ້ເຂົ້າໃນວຽກງານທີ່ຈຳເປັນຂອງຫ້ອງຮຽນ.

**ມາດຕາ 4: ການປະພຶດຂອງນັກສຶກສາ (Students' Behavior)**

1) ນັກສຶກສາທຸກຄົນຕ້ອງປະພຶດຕົນເປັນຄົນສຸພາບຮຽບຮ້ອຍ ເຄົາລົບນັບຖືພະນັກງານ, ອາຈານ ແລະ ອ່ອນນ້ອມຖ່ອມຕົວໃຫ້ກຽດເຊິ່ງກັນ ແລະ ກັນ;

2) ນັກສຶກສາທຸກຄົນຕ້ອງປົກປັກຮັກສາເຄື່ອງຂອງສ່ວນລວມ, ປົກປັກຮັກສາທຳມະຊາດ ແລະ ສິ່ງແວດລ້ອມ, ຮັກສາຄວາມສະອາດຈົບງາມໃນຫ້ອງຮຽນ ແລະ ສະຖານທີ່ສາທາລະນະຕ່າງໆ ທີ່ຕົນເຄື່ອນໄຫວຢູ່;

3) ນັກສຶກສາທຸກຄົນຕ້ອງປະພຶດຕົນເປັນພົນລະເມືອງດີ, ເຄົາລົບກົດໝາຍ, ຮັກສາຮີດຄອງປະເພນີ ອັນດີງາມຂອງຊາດ, ປົກປັກຮັກສາ ແລະ ເສີມຂະຫຍາຍສິລະປະວັດທະນະທຳຂອງຊາດ, ຮັກສາ ແລະ ເສີມຂະຫຍາຍມູນເຊື້ອຄວາມສາມັກຄີລະຫວ່າງເຜົ່າຕ່າງໆໃນວົງຄະນາຍາດແຫ່ງຊາດລາວ ແລະ ຄວາມສາມັກຄີສາກົນ.

**ມາດຕາ 5: ການແຕ່ງກາຍຂອງນັກສຶກສາ (Dressing)**

ໃນຊົ່ວໂມງຮຽນ ຫຼື ໃນການໄປພົວພັນວຽກໃນໂມງລັດຖະການ ແລະ ໃນພິທີທາງການຕ່າງໆ, ນັກສຶກສາທຸກຄົນຕ້ອງນຸ່ງເຄື່ອງແບບນັກສຶກສາຢ່າງຖືກຕ້ອງຕາມລັກສະນະ ຂອງເຄື່ອງແບບນັກສຶກສາ ສພລ ມີດີ:

**1) ສຳລັບນັກສຶກສາຍິງ (For Female):**

- ສິ້ນສີດຳ ຫຼື ສີຟ້າແກ່ ມີຕີນສິ້ນກວ້າງ 15-20 ຊມ, ບໍ່ລ່າມ ແລະ ບໍ່ເຂັບຈົນເກີນໄປ;
- ເສື້ອເຊີດສີຂາວແຂນສັ້ນ ຫຼື ຍາວ ທີ່ມີກາໝາຍຂອງ ສພລ ແລະ ມັດກາລະວັດຂອງ ສພລ, ເອົາເສື້ອເຂົ້າໃນສະໜີ່;
- ສາຍແອວໂລຫະແບບລາວ ຫຼື ໜັງສີດຳ ກວ້າງບໍ່ໃຫ້ເກີນ 3 ຊມ, ຫົວສາຍແອວບໍ່ມີລວດລາຍຈົນເກີນໄປ.
- ເກີບຫຸ້ມສົ້ນສີດຳ ຫຼື ສີນ້ຳຕານແກ່ ສູງບໍ່ເກີນ 4 ຊມ;
- ຜົມແຕ່ງແບບເກົ້າຜົມ, ມັດ ຫຼື ເປຍຢ່າງຮຽບຮ້ອຍ, ຫ້າມບໍ່ໃຫ້ຍ້ອມສີຜົມ ແລະ ປ່ອຍຜົມ;
- ຫ້າມນັກສຶກສາຍິງແຕ່ງກາຍຄືນັກສຶກສາຊາຍມາຮຽນເດັດຂາດ.



Scanned with CamScanner

**2) ສຳລັບນັກສຶກສາຊາຍ (For Male):**

- ໂສ້ງຂາຍາວສີດຳ ຫຼື ສີຟ້າແກ່ຕັດດ້ວຍແພທຳມະດາ;
- ເສື້ອເຊີດສີຂາວແຂນສັ້ນ ຫຼື ຍາວ ທີ່ມີກາໝາຍຂອງ ສພລ ແລະ ມັດກາລະວັດຂອງ ສພລ, ເອົາເສື້ອເຂົ້າໃນສະເໜີ;
- ເກີບໜັງ ຫຼື ເກີບແພແບບຫຸ້ມສົ້ນ ສີດຳ ຫຼື ສີນ້ຳຕານແກ່, ບໍ່ມີລວດລາຍຈົນເກີນໄປ;
- ສາຍແອວໜັງສີດຳກວ້າງບໍ່ເກີນ 3 ຊມ, ຫົວສາຍແອວບໍ່ມີລວດລາຍຈົນເກີນໄປ;
- ຕັດຜົມແບບຈອນໜາທຳມະດາ, ຫ້າມບໍ່ໃຫ້ຍ້ອມສີຜົມ, ບໍ່ໃຫ້ໃສ່ຕຸ້ມຫູ ແລະ ຕ້ອງຫວີຜົມໃຫ້ຈົບງາມ;
- ບໍ່ໃຫ້ແຕ່ງກາຍແບບລວດລາຍ, ບໍ່ໃຫ້ໃສ່ໂສ້ງຍີນ ແລະ ໂສ້ງຂານ້ອຍ;
- ຫ້າມນັກສຶກສາຊາຍແຕ່ງກາຍຄືນັກສຶກສາຍິງມາຮຽນເດັດຂາດ.

3) ການປະຕິບັດລະບຽບການນຸ່ງຖືຂອງ ສພລ :

- ສຳລັບນັກສຶກສາ ສພລ ທຸກຄົນຕ້ອງໃສ່ເສື້ອເຊີດທີ່ມີກາໝາຍຂອງສະຖາບັນມາຮຽນ ໃນມື້ວັນຈັນ;
- ສຳລັບນັກສຶກສາຜູ້ທີ່ເປັນສະມາຊິກ 3 ອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ, ກຳມະບານ) ແມ່ນສາມາດໃສ່ເຄື່ອງນຸ່ງຂອງອົງການຈັດຕັ້ງມາຮຽນໄດ້ໃນມື້ ວັນພຸດ;
- ນັກສຶກສາ ສາມາດໃສ່ເສື້ອໂປໂລຂອງ ສພລ ມາຮຽນໄດ້ປົກກະຕິ ໃນວັນອັງຄານ ຫາ ວັນສຸກ;
- ຫ້າມນັກສຶກສາທີ່ເປັນພະນັກງານ ໃສ່ເຄື່ອງແບບຂອງກົມກອງທີ່ຕົນເອງສັງກັດຢູ່ມາຮຽນໃນຫ້ອງຮຽນ.

ມາດຕາ 6: ການປະຕິບັດເວລາເຂົ້າຮຽນ (School Hours) ປັບປຸງ:

ນັກສຶກສາທຸກຄົນຕ້ອງປະຕິບັດເວລາໃນການເຂົ້າຫ້ອງຮຽນຄື:

1) ນັກສຶກສາທຸກຄົນຕ້ອງເຂົ້າຫ້ອງຮຽນຕາມເວລາທີ່ກຳນົດໃຫ້ ແລະ ເຂົ້າຫ້ອງກ່ອນອາຈານ 5-10 ນາທີເພື່ອກວດກາຈຳນວນພົນ, ເມື່ອອາຈານເຂົ້າຫ້ອງສອນນັກສຶກສາທຸກຄົນຕ້ອງລຸກຂຶ້ນທຳຄວາມເຄົາລົບຄູ-ອາຈານ ແລະ ຄະນະຫ້ອງຕ້ອງລາຍງານ ຈຳນວນນັກສຶກສາ ທີ່ຂາດຮຽນໃຫ້ອາຈານຮັບຮູ້;

2) ນັກສຶກສາທີ່ຕ້ອງການອອກຫ້ອງຮຽນໄວກ່ອນເວລາຮຽນຕ້ອງໄດ້ຮັບອະນຸຍາດຈາກຄູປະຈຳວິຊານັ້ນໆ;

3) ກ່ອນຈະເຂົ້າ-ອອກຫ້ອງຮຽນ, ມີຄຳຖາມ ຫຼື ຕອບອາຈານໃນຫ້ອງຮຽນ ນັກສຶກສາຕ້ອງຍົກມືຂໍອະນຸຍາດຈາກອາຈານເສຍກ່ອນ.

4) ໃນກໍລະນີນັກສຶກສາຄົນໃດ ຫາກເຂົ້າຫ້ອງຮຽນຊ້າຈະຖືກຕັດຄະແນນດັ່ງນີ້:

- ມາຊ້າ 5-10 ນາທີ ຈະຖືກຕັດຄະແນນ 1/3 ຂອງຄະແນນມາຮຽນ;
- ມາຊ້າ 11-20 ນາທີ ຈະຖືກຕັດຄະແນນ 2/3 ຂອງຄະແນນມາຮຽນ;
- ມາຊ້າ 21 ນາທີຂຶ້ນໄປ ຈະຖືກຕັດຄະແນນ 3/3 ຂອງຄະແນນມາຮຽນ (ຖືວ່າຂາດຮຽນ).

ມາດຕາ 7: ການຂໍອະນຸຍາດລາພັກຮຽນ (Absence Request) ປັບປຸງ:

ນັກສຶກສາຄົນໃດຫາກມີຄວາມຈຳເປັນທີ່ຈະຕ້ອງໄດ້ຂາດໂຮງຮຽນ ຜູ້ກ່ຽວສາມາດຍື່ນຄຳຮ້ອງເພື່ອຂໍອະນຸຍາດລາພັກຈາກພາກສ່ວນທີ່ກ່ຽວຂ້ອງ ໂດຍໜ່ວຍງານຮັບຜິດຊອບຈະພິຈາລະນາຕາມແຕ່ລະກໍລະນີ ດ້ວຍເຫດຜົນດັ່ງນີ້:

1) ເຫດຜົນດ້ານສຸຂະພາບ: ການເຈັບປ່ວຍ, ການນັດໝາຍພົບແພດ, ການພັກຟື້ນຈາກອາການບາດເຈັບ ຫຼື ຈຳເປັນຕ້ອງໄດ້ພັກໂຮງຮຽນເພື່ອດູແລຄົນໃນຄອບຄົວທີ່ເຈັບປ່ວຍ;
2) ເຫດຜົນດ້ານຄອບຄົວ: ການສູນເສຍບຸກຄົນໃນຄອບຄົວ, ການເຂົ້າຮ່ວມງານແຕ່ງດອງຂອງບຸກຄົນທີ່ສຳຄັນໃນຄອບຄົວ ຫຼື ກໍລະນີສຸກເສີນອື່ນໆ;
3) ເຫດຜົນດ້ານສາສະໜາ: ການເຂົ້າຮ່ວມພິທີກຳທາງສາສະໜາທີ່ສຳຄັນ ແລະ ຈຳເປັນທີ່ຈະຕ້ອງໄດ້ເຂົ້າຮ່ວມ;
4) ເຫດຜົນດ້ານໂອກາດທາງວິຊາການ: ການທັດສະນະສຶກສາ, ການເຂົ້າຮ່ວມການແຂ່ງຂັນຕ່າງໆ, ການເຂົ້າຮ່ວມກິດຈະກຳນອກຫຼັກສູດ ຫຼື ການສຶກສາທີ່ນແລກປ່ຽນໄລຍະສັ້ນ;
5) ເຫດຜົນດ້ານສະຖານະການສ່ວນຕົວ: ການນັດໝາຍຂຶ້ນສານ, ການຍົກຍ້າຍທີ່ຢູ່ໃໝ່ ຫຼື ພັນທະຜູກພັນສ່ວນຕົວອື່ນໆ ທີ່ຫຼີກລ່ຽງບໍ່ໄດ້.



Scanned with CamScanner

**ມາດຕາ 8: ການພິຈາລະນາຄຳຮ້ອງຂໍອະນຸຍາດລາພັກຮຽນ ແລະ ການຕັດຄະແນນ (Absence Consideration and Grading impact) ປັບປຸງ:**

1) ການພິຈາລະນາ ຄຳຮ້ອງຂໍອະນຸຍາດລາພັກຮຽນ ໃນແຕ່ລະກໍລະນີໃຫ້ປະຕິບັດດັ່ງນີ້:

- ຂໍລາພັກ 01 ຄັ້ງ 05 ວັນ ຈະຖືກພິຈາລະນາໂດຍ ຫົວໜ້າພະແນກຄຸ້ມຄອງວິຊາການ(ຕ້ອງຍື່ນຄຳຮ້ອງກ່ອນ 01 ວັນ);
- ຂໍລາພັກ 06 ວັນຂຶ້ນໄປ ຈະຖືກພິຈາລະນາໂດຍ ຜູ້ອຳນວຍການ ສພລ (ຕ້ອງຍື່ນຄຳຮ້ອງກ່ອນ 02 ວັນ);

(ໃນກໍລະນີເຈັບປ່ວຍກະທັນຫັນ ຫຼື ເກີດອຸບັດຕິເຫດສຸກເສີນ ຄະນະຫ້ອງ ຫຼື ຜູ້ປົກຄອງຕ້ອງໄດ້ແຈ້ງພາກວິຊາ ແລະ ຂຽນຄຳຮ້ອງຂໍລາພັກໃຫ້ຜູ້ກ່ຽວ ພາຍໃນເວລາ 3 ວັນ ຫຼື ຂຽນຄຳຮ້ອງຍ້ອນຫຼັງພາຍໃນ 3 ວັນ ຫຼັງຈາກມາຮຽນປົກກະຕິ);

**2) ຫຼັກການພິຈາລະນາຄຳຮ້ອງຂໍລາພັກຮຽນ (Principles for considering absence request):**

- ພິຈາລະນາຈາກເອກະສານທີ່ຄັດຕິດ ຫຼື ຈາກການສຳພາດ;
- ການຍື່ນຄຳຮ້ອງລ່ວງໜ້າ (ໝາຍເຖິງຜູ້ທີ່ມີແຜນທີ່ແນ່ນອນໃນການຂໍລາພັກ);
- ມີເຫດຜົນລາພັກທີ່ສົມເຫດສົມຜົນ;
- ໄລຍະເວລາ (ຄວາມຖີ່) ຂອງການຍື່ນຄຳຮ້ອງ;
- ສະຖານະດ້ານວິຊາການ (ຜົນການຮຽນ);
- ຜົນກະທົບຕໍ່ການປະເມີນຜົນການຮຽນ (ໝາຍເຖິງການຂໍຂາດຮຽນໃນຊ່ວງສອບເສັງກາງພາກ ຫຼື ສອບເສັງທ້າຍພາກ);
- ການຢັ້ງຢືນຈາກຜູ້ປົກຄອງ ແລະ ການປະຕິບັດຕາມນະໂຍບາຍຂອງ ສພລ.

**3) ການຕັດຄະແນນຂາດຮຽນ (Grading impact):**

- ນັກສຶກສາທີ່ຂາດຮຽນໂດຍບໍ່ໄດ້ຮັບອະນຸຍາດໃຫ້ລາພັກ ຈະຖືກຕັດຄະແນນມາຮຽນ **100%** ຂອງຊົ່ວໂມງຮຽນນັ້ນ;
- ນັກສຶກສາທີ່ຂາດຮຽນໂດຍໄດ້ຮັບອະນຸຍາດໃຫ້ລາພັກ ຈະຖືກຕັດຄະແນນມາຮຽນ ຕັ້ງແຕ່ **0-50%** ຂອງຊົ່ວໂມງຮຽນນັ້ນ ເຊິ່ງຈະຂຶ້ນກັບການພິຈາລະນາຢ່າງພາວະວິໄສ ແລະ ອັດຕະວິໄສ ຂອງຄະນະຮັບຜິດຊອບ.

**4) ການປະຕິບັດວິໄນຕໍ່ນັກສຶກສາທີ່ຂາດຮຽນ (Disciplinary action for absenteeism):**

- ນັກສຶກສາທີ່ຂາດຮຽນ **19-30%** ໃນຊົ່ວໂມງຮຽນທັງໝົດ ຂອງວິຊາໃດໜຶ່ງ ແມ່ນຈະບໍ່ມີສິດສອບເສັງ (ຈະໄດ້ຄະແນນ F, ຕົກ) ໃນວິຊານັ້ນ, ການຍົກລະດັບ F ນັກສຶກສາຈະຕ້ອງໄດ້ລົງທະບຽນຮຽນຄືນຕັ້ງແຕ່ 15-30 ຊົ່ວໂມງ;
- ນັກສຶກສາທີ່ຂາດຮຽນ **31%** ຂຶ້ນໄປ ໃນຊົ່ວໂມງຮຽນທັງໝົດ ຂອງວິຊາດໜຶ່ງ ແມ່ນຈະບໍ່ມີສິດສອບເສັງ (ຈະໄດ້ຄະແນນ I, ບໍ່ສົມບູນ) ໃນວິຊານັ້ນ, ການຍົກລະດັບ I ນັກສຶກສາຈະຕ້ອງໄດ້ລົງທະບຽນຮຽນຄືນເຕັມເວລາ 1 ພາກຮຽນ.

**ມາດຕາ 9: ການຮຽນທາງໄກ (Online learning)**

ໃນກໍລະນີເກີດໄພພິບັດທາງທຳມະຊາດ, ໂລກລະບາດ ຫຼື ສະພາບການທີ່ບໍ່ອຳນວຍຕໍ່ການຮຽນ-ການສອນແບບເຊິ່ງໜ້າ ທີ່ມີແຈ້ງການໃຫ້ໂຈະການຮຽນແບບເຊິ່ງໜ້າຈາກກະຊວງສຶກສາທິການ ແລະ ກິລາ ຫຼື ຈາກພາກສ່ວນທີ່ກ່ຽວຂ້ອງ ນັກສຶກສາທຸກຄົນຈະຕ້ອງໄດ້ຮຽນ ແລະ ສອບເສັງ ຜ່ານຮູບແບບທາງໄກ (ຮູບແບບອອນລາຍ) ຕາມການແຈ້ງການ ແລະ ການແນະນຳຂອງ ສພລ ໃນແຕ່ລະໄລຍະ; ການຮຽນໃນຮູບແບບທາງໄກ (ຮູບແບບອອນລາຍ) ອາດຈະໃຊ້ເວລາຍາວ ຫຼື ສັ້ນກວ່າ ການຮຽນແບບເຊິ່ງໜ້າ ເພື່ອຮັບປະກັນໃຫ້ບັນດານັກສຶກສາໄດ້ຮຽນຄົບຈຳນວນໜ່ວຍກິດ ທີ່ໄດ້ກຳນົດໃນຫຼັກສູດ ແລະ ສາມາດສຳເລັດການສຶກສາຕາມປະຕິທິນການຮຽນ- ການສອນ ຂອງແຕ່ລະສົກຮຽນ.

**ມາດຕາ 10: ການນຳໃຊ້ AI ເຂົ້າໃນການຮຽນ (Use the AI for Learning)**

AI (Artificial Intelligence) ຫຼື ປັນຍາປະດິດ ເປັນເຄື່ອງມືທີ່ຊ່ວຍອະທິບາຍ, ຊ່ວຍຂະຫຍາຍຄວາມຮູ້, ຊ່ວຍວິເຄາະບັນຫາ ຫຼື ຊ່ວຍໃນການຊອກຫາຂໍ້ມູນຕ່າງໆແບບງ່າຍດາຍ ແຕ່ນັກສຶກສາຕ້ອງໄດ້ວິເຄາະຂໍ້ມູນຈາກແຫຼ່ງອື່ນໆ ທີ່ສາມາດເຊື່ອຖືໄດ້ເພີ່ມຕື່ມ, ການນຳໃຊ້ AI ຂອງນັກສຶກສາ ສພລ ຈະຕ້ອງຢູ່ໃນພາຍໃຕ້ການຄຳແນະນຳຂອງອາຈານສອນແຕ່



Scanned with CamScanner

ລະວິຊາ ທີ່ຈະກຳນົດ ຫຼື ອະນຸຍາດໃຫ້ນັກສຶກສານຳໃຊ້ໄດ້ໃນກໍລະນີສະເພາະເຊັ່ນ: ການຫາຂໍ້ມູນໃນການເຮັດບົດລາຍງານ, ວຽກບ້ານ, ບົດຝຶກຫັດ ຫຼື ອື່ນໆ ທັງນີ້ກໍເພື່ອປ້ອງກັນການນຳໃຊ້ໄປໃນທາງທີ່ຜິດ.

**ມາດຕາ 11: ການຊຳລະ ແລະ ການຖອນຄ່າຮຽນ.**

**1) ການຊຳລະຄ່າຮຽນ (Tuition fee):**

- ນັກສຶກສາຕ້ອງມາລົງທະບຽນ ຊຳລະຄ່າຮຽນໃຫ້ແກ່ພະແນກການເງິນ ຕາມວັນ ແລະ ເວລາ ທີ່ກຳນົດໃຫ້, ສຳລັບນັກສຶກສາຄົນໃດ ຫາກລົງທະບຽນຊຳລະຄ່າຮຽນຊ້າເກີນກຳນົດ ແມ່ນອາດຈະບໍ່ສາມາດເຂົ້າຮຽນຕໍ່ໄດ້ໃນພາກຮຽນຕໍ່ໄປໄດ້ ແລະ ຈະບໍ່ມີສິດຮັບທຶນການສຶກສາ (ໃນກໍລະນີຜູ້ກ່ຽວຕິດອັນດັບນັກສຶກສາທີ່ມີຜົນການຮຽນດີເດັ່ນໃນຫ້ອງຮຽນ);

- ກໍລະນີຊຳລະຄ່າຮຽນຜ່ານລະບົບທະນາຄານ ນັກສຶກສາຕ້ອງສົ່ງຫຼັກຖານການຊຳລະຄ່າຮຽນ ແລະ ລາຍລະອຽດຕ່າງໆ ເຊັ່ນ: ຊື່ ແລະ ນາມສະກຸນ, ຫ້ອງຮຽນ, ປີຮຽນ, ລະຫັດບັດນັກສຶກສາ ຕາມການແຈ້ງການຂອງພະແນກການເງິນ ສພລ ເພື່ອອອກບິນຊຳລະຄ່າຮຽນຕາມລະບຽບການ;

- ສຳລັບນັກສຶກສາທີ່ມີຄວາມຈຳເປັນ ທາງດ້ານການເງິນ ແມ່ນສາມາດລົງທະບຽນຊຳລະຄ່າຮຽນໄດ້ຈຳນວນ 50% ຂອງຄ່າຮຽນ 01 ພາກຮຽນ ແລະ ຕ້ອງຊຳລະໃຫ້ຄົບ 100% ກ່ອນການສອບເສັງກາງພາກຮຽນ.

**2) ການຖອນຄ່າຮຽນ (Tuition fee withdraw)**

ນັກສຶກສາເມື່ອຊຳລະຄ່າຮຽນແລ້ວ ແມ່ນຈະບໍ່ສາມາດຖອນຄ່າຮຽນຄືນໄດ້, ຍົກເວັ້ນແຕ່ກໍລະນີຈຳເປັນພິເສດ ເຊິ່ງນັກສຶກສາ ສາມາດຍື່ນຄຳຮ້ອງເພື່ອຂໍພິຈາລະນາຖອນຄ່າຮຽນໄດ້ ໃນກໍລະນີດັ່ງນີ້:

- ນັກສຶກສາເສຍຊີວິດ;
- ມີພະຍາດຕິດແປດຮ້າຍແຮງ;
- ເກີດອຸບັດຕິເຫດຮ້າຍແຮງ;
- ກໍລະນີຈຳເປັນອື່ນໆ ທີ່ຜ່ານການພິຈາລະນາ ແລະ ເຫັນດີຈາກຄະນະອຳນວຍການ ສພລ.

ຄ່າຮຽນທີ່ສາມາດຖອນຄືນໄດ້ສູງສຸດຄື 80% ຂອງຄ່າຮຽນທີ່ໄດ້ກຳນົດໃນແຕ່ລະພາກຮຽນ (ຕ້ອງຍື່ນຄຳຮ້ອງກ່ອນການເປີດຮຽນພາກຮຽນໃໝ່), ໃນກໍລະນີຍື່ນຄຳຮ້ອງຫຼັງຈາກການເປີດພາກຮຽນໃໝ່ 2 ອາທິດ ທາງ ສພລ ຈະພິຈາລະນາຕາມຄວາມເໝາະສົມ, ແຕ່ຖ້າຫາກນັກສຶກສາຍື່ນໃບຄຳຮ້ອງກາຍກຳນົດດັ່ງກ່າວແມ່ນບໍ່ສາມາດຖອນຄ່າຮຽນຄືນໄດ້.

ພາຍຫຼັງທີ່ຄຳຮ້ອງຖືກອະນຸມັດ ທາງ ສພລ ຈະຖືວ່າຜູ້ກ່ຽວໄດ້ສິ້ນສຸດການເປັນນັກສຶກສາຂອງ ສພລ ແລະ ໃນກໍລະນີຕ້ອງການກັບມາຮຽນຜູ້ກ່ຽວຕ້ອງໄດ້ລົງທະບຽນສອບເສັງຄັດເລືອກເຂົ້າຮຽນໃໝ່ຕາມລະບຽບການ.

**ມາດຕາ 12: ການໂຈະການຮຽນ, ການປະລະການຮຽນ ແລະ ການຍ້າຍສາຂາຮຽນ**

**(Drop, neglect of school and move to another program)**

**1) ການໂຈະການຮຽນ:** ນັກສຶກສາ ສພລ ຜູ້ທີ່ມີຄວາມຈຳເປັນຈະຕ້ອງຢຸດການຮຽນຊົ່ວຄາວ, ຈະຕ້ອງໄດ້ຍື່ນຄຳຮ້ອງເພື່ອຂໍໂຈະການຮຽນ ໂດຍຜ່ານການພິຈາລະນາ ແລະ ອະນຸມັດຈາກ ຜູ້ອຳນວຍການ ສພລ.

- ນັກສຶກສາໃນລະດັບອະນຸປະລິນຍາ ແລະ ປະລິນຍາຕີຕໍ່ເນື່ອງ ສາມາດໂຈະການຮຽນໄດ້ 1 ຄັ້ງ (ຄັ້ງລະ 1 ປີ ຫຼື 1 ສົກຮຽນ) ຕະຫຼອດຊຸດຮຽນ.
- ນັກສຶກສາໃນລະດັບປະລິນຍາຕີ ສາມາດໂຈະການຮຽນໄດ້ 2 ຄັ້ງ (ຄັ້ງລະ 1 ປີ ຫຼື 1 ສົກຮຽນ) ຕະຫຼອດຊຸດຮຽນ.

**2) ການປະລະການຮຽນ:**

1) ນັກສຶກສາທີ່ປະລະການການຮຽນ ຫຼື ຢຸດການຮຽນດ້ວຍຕົນເອງເປັນເວລາ 01 ພາກຮຽນ ໂດຍບໍ່ມີເອກະສານອະນຸຍາດການໂຈະການຮຽນ, ແຕ່ຜູ້ກ່ຽວມີຈຸດປະສົງຢາກກັບມາຮຽນ ຫຼື ຢາກຮັກສາສະຖານະພາບການເປັນນັກສຶກສາ ຂອງ ສພລ, ຜູ້ກ່ຽວຕ້ອງໄດ້ຍື່ນຄຳຮ້ອງຂໍໂຈະການຮຽນຊົ່ວຄາວ (ໂຈະການຮຽນຍ້ອນຫຼັງ), ກໍລະນີດັ່ງກ່າວ ນັກສຶກສາຈະຕ້ອງໄດ້ເສຍຄ່າປັບໃໝ 200,000 ກີບ.

2) ສຳລັບນັກສຶກສາທີ່ປະລະການການຮຽນ ຫຼື ຢຸດການຮຽນດ້ວຍຕົນເອງເປັນເວລາ 02 ພາກຮຽນຂຶ້ນໄປ ຫຼື 1 ສົກຮຽນ ໂດຍບໍ່ມີເອກະສານອະນຸຍາດການໂຈະການຮຽນ ທາງສະຖາບັນຖືວ່າຜູ້ກ່ຽວປະລະການຮຽນ ແລະ



Scanned with CamScanner

ສະຖານະພາບການເປັນນັກສຶກສາຈະສິ້ນສຸດລົງ, ທາງ ສພລ ຈະບໍ່ອອກໃບຢັ້ງຢືນນັກສຶກສາ ຫຼື ເອກະສານການຢັ້ງຢືນໃດໆໃຫ້ແກ່ຜູ້ກ່ຽວ ແລະ ຈະຖືກລຶບລ້າງຜົນການຮຽນທັງໝົດທີ່ຜ່ານມາອີກດ້ວຍ, ໃນກໍລະນີຢາກກັບມາຮຽນຜູ້ກ່ຽວຕ້ອງໄດ້ລົງທະບຽນສອບເສັງຄັດເລືອກເຂົ້າຮຽນໃໝ່ຕາມລະບຽບການ.

**3) ການຍ້າຍສາຂາຮຽນ:** ນັກສຶກສາທີ່ມີຄວາມຕ້ອງການປ່ຽນສາຂາວິຊາຮຽນ ຫຼື ຫຼັກສູດອື່ນໆ ພາຍໃນ ສພລ (ຈຳນວນຄ່າຮຽນແມ່ນຂຶ້ນກັບຄ່າຮຽນແຕ່ລະຫຼັກສູດ) ກໍລະນີດັ່ງກ່າວ ມີສິດປ່ຽນໄດ້ສະເພາະນັກສຶກສາປີທີ 1 ເທົ່ານັ້ນ ແລະ ຜູ້ກ່ຽວຕ້ອງຍື່ນຄຳຮ້ອງຂໍໂອນຄ່າຮຽນ ກ່ອນການເປີດພາກຮຽນ ຫຼື ໃນລະຫວ່າງ ອາທິດທີ 01 ເຖິງ ອາທິດທີ 04 ຂອງການເປີດພາກຮຽນໃໝ່, ຈຶ່ງຈະສາມາດໂອນຄ່າຮຽນໃສ່ສາຂາວິຊາຮຽນອື່ນໄດ້ ໃນຈຳນວນ 80% ຂອງມູນຄ່າທີ່ໄດ້ຊຳລະຄ່າຮຽນ, ຖ້າກາຍກຳນົດໄປຫາ ອາທິດທີ 05 ຂອງການເປີດພາກຮຽນໃໝ່ຂຶ້ນໄປ ຖືວ່າສະຫຼະສິດ ແລະ ບໍ່ສາມາດໂອນ ຫຼື ຖອນຄ່າຮຽນໄດ້ ບໍ່ວ່າກໍລະນີໃດໆ.

**ມາດຕາ 13: ການຍ້ອງຍໍນັກສຶກສາ (Appreciation)**

ນັກສຶກສາທີ່ຮຽນເກັ່ງ, ມີຜົນການຮຽນດີເດັ່ນ ແລະ ເປັນແບບຢ່າງທີ່ດີ ໃນການປະຕິບັດຕາມແຈ້ງການ ແລະ ຂໍ້ກຳນົດ, ກົດລະບຽບຕ່າງໆ ຂອງການຈັດຕັ້ງລະດັບຕ່າງໆ ຂອງ ສພລ ຈະໄດ້ຮັບການພິຈາລະນາ ຍ້ອງຍໍຈາກການຈັດຕັ້ງທີ່ກ່ຽວຂ້ອງຂອງ ສພລ ດ້ວຍຮູບການ ທີ່ເໝາະສົມດັ່ງຕໍ່ໄປນີ້:

**1) ການມອບທຶນການສຶກສາ (Scholarship):**

ສຳລັບນັກສຶກສາຜູ້ຮຽນດີ, ຮຽນເກັ່ງ, ມີຜົນການສອບເສັງດີ, ປະຕິບັດກົດລະບຽບ, ຕື່ນຕົວຕັ້ງໃຈໃນການຊ່ວຍເຫຼືອວຽກງານຂອງທາງສະຖາບັນ ແລະ ປະຕິບັດຕາມເງື່ອນໄຂຂອງການມອບທຶນການສຶກສາຂອງ ສພລ ວາງອອກ ແມ່ນມີສິດໄດ້ຮັບທຶນການສຶກສາຕາມຂໍ້ຕົກລົງທີ່ໄດ້ກຳນົດໄວ້;

**2) ການມອບໃບຍ້ອງຍໍ (Certificate of Appreciation):**

ສຳລັບນັກສຶກສາທີ່ເປັນອາສາສະໝັກ, ເຂົ້າຮ່ວມກິດຈະກຳນອກຫຼັກສູດ, ເປັນບຸກຄົນທີ່ຕັ້ງໃຈຮ່ຳຮຽນ, ມາລະຍາດດີ ມີຄຸນນະທຳ ທາງສະພາວິຊາການ ສພລ ຈະພິຈາລະນາມອບໃບຍ້ອງຍໍໃຫ້ແກ່ຜູ້ກ່ຽວ ແລະ ຈາລຶກຊື່ໄວ້ໃນປຶ້ມປະຫວັດສາດຂອງສະຖາບັນ ຫຼື ຈະໄດ້ຮັບທຶນການສຶກສາຕາມຄວາມເໝາະສົມ;

**3) ນັກສຶກສາກຽດນິຍົມ (First class honors):**

ສຳລັບນັກສຶກສາຄົນໃດທີ່ສຳເລັດການສຶກສາ ທີ່ມີຄ່າລະດັບແຕ່ລະວິຊາ 3.00 ຂຶ້ນໄປ, ມີຄ່າລະດັບສະເລ່ຍແຕ່ລະພາກຮຽນ 3.50 ຂຶ້ນໄປ, ມີຄະແນນສະເລ່ຍສະສົມ 3.85 ຂຶ້ນໄປ ແລະ ມີເງື່ອນໄຂທີ່ສອດຄ່ອງກັບຂໍ້ກຳນົດທີ່ກ່ຽວຂ້ອງ ຂອງ ສພລ ຜູ້ກ່ຽວຈະໄດ້ຮັບໃບປະກາສະນິຍະບັດກຽດນິຍົມ (ໃບປະກາດແດງ).

**ມາດຕາ 14: ຂໍ້ຫ້າມຂອງນັກສຶກສາ (Prohibition for Students)**

1) ຫ້າມພົວພັນແບບຊູ້-ສາວແບບຜິດຮີດຄອງປະເພນີ ແລະ ເປັນການລະເມີດຕໍ່ກັບລະບຽບກົດໝາຍບ້ານເມືອງ, ໂດຍສະເພາະໃນຂອບເຂດ ສພລ;

2) ຫ້າມຫຼິ້ນການພະນັນທຸກປະເພດໃນຂອບເຂດ ສພລ;

3) ຫ້າມຫຼິ້ນກິລາທຸກປະເພດໃນສະຖານທີ່ທີ່ທາງ ສພລ ບໍ່ກຳນົດໃຫ້;

4) ຫ້າມສ້າງກຸ່ມກ້ອນ ແລະ ແບ່ງແຍກຄວາມສາມັກຄີ;

5) ຫ້າມນຳເຂົ້າ, ຊື້-ຂາຍ, ຄອບຄອງອາວຸດ ແລະ ຢາເສບຕິດທຸກປະເພດ;

6) ຫ້າມດື່ມສິ່ງມຶນເມົາ ແລ້ວອາລະວາດຜິດຖຽງກັນໃນຂອບເຂດ ສພລ;

7) ຫ້າມຂີດຂຽນ ຫຼື ແຕ້ມຮູບລາມົກເປິະເປື້ອນໃນບໍລິເວນ ສພລ;

8) ຫ້າມທຳລາຍໜັງສື ຫຼື ປ້າຍປະກາດຕ່າງໆຂອງ ສພລ;

9) ຫ້າມສ້າງຄວາມບໍ່ສະຫງົບ ຫຼື ຄວາມວຸ້ນວາຍ, ກໍລະນີເກີດອຸບັດຕິເຫດ ຫຼື ເກີດຄວາມເສຍຫາຍ ພາຍໃນ ສພລ ຜູ້ກ່ຽວຈະຕ້ອງໄດ້ຮັບຜິດຊອບ;



Scanned with CamScanner

10) ຫ້າມນຳແຈ້ງການ, ຮູບພາບ, ພາບເຄື່ອນໄຫວ ຫຼື ອື່ນໆ ທີ່ກ່ຽວຂ້ອງກັບ ສພລ ໄປໂພສລົງໃນ ສື່ສັງຄົມອອນລາຍ ຫຼື ຊ່ອງທາງອື່ນໆ ໃນທາງທີ່ບໍ່ດີ ທີ່ອາດຈະກໍ່ໃຫ້ເກີດຄວາມເສຍຫາຍ ໃຫ້ແກ່ ສພລ;

11) ໃນເວລາຮຽນ ຫ້າມນັກສຶກສາດຳເນີນກິດຈະການ ຊື້ ຫຼື ຂາຍ ສິນຄ້າອອນລາຍ ທີ່ມີການຮັບ-ສົ່ງເຄື່ອງ ໃນບໍລິເວນ ສພລ, ອັນເປັນສາເຫດເຮັດໃຫ້ລົບກວນເວລາຮຽນ ແລະ ກິດຈະກຳການສັນຈອນ ພາຍໃນ ສພລ;

12) ຫ້າມນັກສຶກສາກ່າຍບົດສອບເສັງຂອງໝູ່ເພື່ອນໃນເວລາສອບເສັງ;

13) ຫ້າມນຳໃຊ້ໂທລະສັບມືຖືໃນເວລາຢູ່ໃນຫ້ອງຮຽນ, ຍົກເວັ້ນກໍລະນີໄດ້ຮັບອະນຸຍາດຈາກຄູປະຈຳວິຊາ.

**ມາດຕາ 15: ການປະຕິບັດວິໄນຕໍ່ນັກສຶກສາ (Discipline and penalty)**

ນັກສຶກສາທຸກຄົນທີ່ປະພຶດຕົນບໍ່ດີ, ກະທຳຜິດຕໍ່ກົດລະບຽບ, ຂໍ້ກຳນົດຕ່າງໆຂອງ ສພລ ຫຼື ກະທຳຜິດລະບຽບກົດໝາຍບ້ານເມືອງ ແລະ ຮີດຄອງປະເພນີ, ລ້ວນແຕ່ຈະຖືກປະຕິບັດວິໄນດ້ວຍຮູບການ ແຕ່ລະກໍລະນີ ດັ່ງຕໍ່ໄປນີ້:

1) ຖືກຕັກເຕືອນ;

2) ຂຽນໃບສຳຫຼວດພ້ອມທັງຖືກຕັດຄະແນນ ຫຼື ຈະຖືກປັບໃໝຕາມມູນຄ່າຄວາມເສຍຫາຍຂອງແຕ່ລະກໍລະນີ;

3) ລຶບລ້າງຜົນການຮຽນໜຶ່ງພາກຮຽນ ຫຼື ໜຶ່ງສົກຮຽນຕາມຄວາມເໝາະສົມ, ກໍລະນີຕ້ອງການຮຽນຄືນ ແມ່ນຕ້ອງໄດ້ລົງທະບຽນຮຽນຄືນໃໝ່;

4) ໂຈະ ຫຼື ລຶບລ້າງຜົນການສອບເສັງ ຫຼື ຕັດສິດການຮັບປະກາສະນີຍະບັດ;

5) ຕັດສະຖານະພາບເປັນນັກສຶກສາ ສພລ;

6) ຕັດສະຖານະພາບເປັນນັກສຶກສາ ສພລ ພ້ອມທັງປະກອບສຳນວນຟ້ອງສານ.

**ມາດຕາ 16: ຜົນສັກສິດ (Effectiveness)**

ກົດລະບຽບສະບັບນີ້ ມີຜົນສັກສິດ ນັບແຕ່ມື້ທີ່ ຜູ້ອຳນວຍການສະຖາບັນພາສາຕ່າງປະເທດໂລໂກສ ລົງລາຍເຊັນເປັນຕົ້ນໄປ.

ຜູ້ອຳນວຍການ

ປອ. ຈິນຊຸນ ຈອງ